Washington State Department of Social & Health Services
Transforming lives

DEVELOPMENTAL DISABILITIES ADMINISTRATION (DDA)

# ລາຍລະອຽດກ່ຽວກັບ ICAP ສຳລັບຜູ້ຕອບນາ
# Information about the ICAP for Respondents

## ICAP ແມ່ນຫຍັງ?

The Inventory for Client and Agency Planning (ICAP) ແມ່ນເຄື່ອງມືການຕີລາຄາປະເມີນຜົນຊຶ່ງຈະຊ່ວຍໃນການພິຈາລະນາເບິ່ງວ່າບຸກຄົນຈະມີເງື່ອນໄຂໄດ້ຮັບ ຫລື ບໍ່ ທີ່ຈະເປັນລູກຄ້າຂອງພະແນກປົກຄອງຄວາມເສັຽອົງຄະດ້ານການຈະເຣີນເຕີບໂຕ Developmental Disabilities Administration (DDA). ICAP ໄດ້ຖືກເອົາມາໃຊ້ເພື່ອຈະພິຈາລະນາເບິ່ງວ່າຜູ້ຮ້ອງຂໍມີ "ຂອບເຂດຫລວງຫລາຍ" ຕາມທີ່ຖືກຕີຄວາມຫມາຍໄວ້ຢູ່ໃນກົດລະບຽບ(WAC 388-823).

## ແມ່ນໃຜສາມາດຄວບຄຸມເຮັດນຳ ICAP?

ກົມຈະເອົາໃຫ້ ແລະ ຈັດຫາການຄວບຄຸມເຮັດນຳ ICAP. ກົມຈະເບິ່ງວ່າແມ່ນໃຜທີ່ຈະໃຊ້ໃຫ້ເປັນ "ຜູ້ຕອບນາ" (WAC 388-823-0930).

## ແມ່ນໃຜມີຄຸນນະວຸດທິທີ່ຈະເປັນຜູ້ຕອບນາ?

ພໍ່ແມ່ຄົນໃດຄົນນຶ່ງ, ນາຍຄູ ຫລື ບຸກຄົນຜູ້ທີ່ຮູ້ຈັກດີນຳຄົນຜູ້ທີ່ກຳລັງຖືກຕີລາຄາປະເມີນຜົນເບິ່ງສາມາດເອົາລາຍລະອຽດທີ່ຕ້ອງການໃຫ້ເພື່ອຈະເຮັດ ICAP ໃຫ້ແລ້ວ. ICAP ຈະຖືກເຮັດໃຫ້ແລ້ວໂດຍຜູ້ຕອບນາຜູ້ທີ່ຮູ້ຈັກລູກຄ້າມາຢ່າງຫນ້ອຍເປັນເວລາສາມເດືອນ ແລະ ຜູ້ທີ່ເຫັນເຂົາເຈົ້າແຕ່ລະວັນໄປ.ຖ້າຫາກວ່າບໍ່ມີຄົນໃດຜູ້ທີ່ສອດຄ່ອງນຳການຕີຄວາມຫມາຍຂອງຜູ້ຕອບນາ, ICAP ບໍ່ສາມາດຖືກເຮັດໄດ້. ໂດຍປາສຈາກຜູ້ຕອບນາທີ່ມີຄຸນນະວຸດທິ, DDA ບໍ່ສາມາດທີ່ຈະພິຈາລະນາເບິ່ງເງື່ອນໄຂໄດ້ຮັບພາຍໃຕ້ສະພາບການແນວໃດແນວນຶ່ງທີ່ຕ້ອງການ ICAP (WAC 388-823-0940).

## ຜູ້ຕອບນາຈັກຄົນທີ່ກົມສາມາດໃຊ້?

ກົມສາມາດໃຊ້ຜູ້ຕອບນາຫລາຍໆຄົນເທົ່າທີ່ຈຳເປັນເພື່ອຈະໄດ້ລາຍລະອຽດຄົບຖ້ວນ ແລະ ຖືກຕ້ອງກ່ຽວກັບຄວາມສາມາດຂອງຜູ້ຮ້ອງຂໍ.

## ຜູ້ຮ້ອງຂໍເປັນຜູ້ຕອບນາໄດ້ບໍ່?

ບໍ່ໄດ້. ຜູ້ຮ້ອງຂໍຈະເອົາຄວາມເຫັນໃຫ້ໄດ້ແຕ່ຈະບໍ່ເປັນຜູ້ຕອບນາທີ່ມີຄຸນນະວຸດທິໄດ້ຈັກເທື່ອ.

## ຜູ້ຮ້ອງຂໍຈະຖືກຖາມໃຫ້ຕອບຄຳຖາມ ຫລື ສະແດງພາລະກິດບາງອັນໄດ້ບໍ່?

DDA ອາດຈະປຶກສາ, ສັງເກດເບິ່ງ, ຫລື ຖາມຜູ້ຮ້ອງຂໍໃຫ້ສະແດງພາລະບາງຢ່າງເພື່ອຈະເຮັດໃຫ້ຄຳຕອບມີເວລາ.

"ອີງການຄາດຄະເນຂອງທ່ານໃສ່ລາຍລະອຽດ ຫລື ການສັງເກດເບິ່ງປະສິດທິພາບຂອງລູກຄ້າໃນພາລະກິດທີ່ຄ້າຍຄຽງກັນ ຫລື ກ່ຽວຂ້ອງ." (ICAP ປຶ້ມຄູ່ມື, Appendix D, ຫນ້າ 153)

"ເພື່ອວ່າຈະໃຫ້ຜົນອອກມາຈະໃຊ້ການໄດ້, ມັນຈຳເປັນທີ່ລາຍລະອຽດຈະຖືກບັນທຶກໄວ້ຊຶ່ງຈະສະທ້ອນເຖິງການປະພຶດອັນແທ້ຈິງຂອງລູກຄ້າໃນສະພາບການທັມມະດາ. ລາຍລະອຽດຈະຊອກເອົາມາໄດ້ຈາກປຶ້ມຄູ່ມື ICAP, ຂອງຈາກການສຳພາດໂດຍການໃຊ້ປຶ້ມຄູ່ມື, ຫລື ແມ້ແຕ່ຈາກການຂໍໃຫ້ລູກຄ້າທີ່ຈະເຮັດແນວໃດແນວນຶ່ງ. ມັນບໍ່ໄດ້ຖືກຕັ້ງໃຈໃຫ້ເປັນການສອບເບິ່ງປະສິດທິພາບຂອງການທຳງານ, ແຕ່ວ່າ, ຖ້າຫາກຈຳເປັນ, ມັນຈະເຫມາະສົມທີ່ຈະໃຊ້ຂໍ້ມູນຮ່ວມກັບລາຍລະອຽດທີ່ຖືກເອົາໃຫ້ໂດຍຜູ້ຕອບນາ." (ເດືອນເຟບຣູຣີ 26, 2003, ອີແມລ໌ຈາກ Brad Hill ໄປຫາ DDA)

## ຜູ້ຕອບນາຈະຖືກບົ່ງໃຫ້ເຮັດຫຍັງແດ່?

ຜູ້ຕອບນາໄດ້ຖືກບົ່ງໃຫ້ຕອບຄຳແຈ້ງການແຕ່ລະອັນໃນ ICAP ດ້ວຍຄຳຕອບອັນນຶ່ງໃນສີ່ຄຳຕອບທີ່ຊີ້ບອກໄດ້ຖືກຕ້ອງທີ່ສຸດເຖິງຄວາມສາມາດຂອງບຸກຄົນ. ຕໍ່ລົງໄປນີ້ແມ່ນສະລູບຄວາມຂອງຄຳຕອບເຫລົ່ານີ້:

<u>ບໍ່ເຄີຍຈັກເທື່ອ</u> <u>ຫລື</u> <u>ຫນ້ອຍທີ່ສຸດ (0)</u> ຊີ້ບອກວ່າຫນ້າທີ່ແມ່ນຍາກໂພດ, ຫລື ບຸກຄົນບໍ່ຖືກອະນຸຍາດໃຫ້ເຮັດຫນ້າທີ່ນີ້ຍ້ອນວ່າມັນບໍ່ປອດພັຍ. ບຸກຄົນບໍ່ເຄີຍຈັກເທື່ອ ຫລື ປະຕິບັດຫນ້ອຍທີ່ສຸດໃນທຸກໆພາກສ່ວນຂອງຫນ້າທີ່ໂດຍປາດສະຈາກຄວາມຊ່ວຍເຫລືອເຖິງແມ່ນວ່າຈະຖືກຖາມກໍຕາມ.

<u>ເຮັດ,</u> <u>ແຕ່ວ່າບໍ່ໄດ້ດີ (1)</u> ບຸກຄົນບາງເທື່ອປະຕິບັດຫນ້າທີ່ໂດຍປາດສະຈາກຄວາມຊ່ວຍເຫລືອແຕ່ວ່າເຮັດບໍ່ໄດ້ດີ. ເຖິງແມ່ນວ່າເຂົາເຈົ້າໄດ້ພະຍາຍາມທີ່ຈະເຮັດທຸກໆພາກສ່ວນຂອງພາລະຫນ້າທີ່ໂດຍປາດສະຈາກຄວາມຊ່ວຍເຫລືອ ຫລື ການຄວບຄຸມເບິ່ງນຳ, ຜົນອອກມາແມ່ນບໍ່ດີ. ມັນບໍ່ເປັນຫຍັງດອກຖ້າຫາກວ່າເຂົາເຈົ້າຕ້ອງການທີ່ຈະຖືກຖາມ ຫລື ຖືກເຕືອນໃຈ. ບຸກຄົນເຮັດພາລະຫນ້າທີ່ປະມານ 25 ເປີເຊັນຂອງເວລາ.

<u>ເຮັດໄດ້ດີປານກາງ (2)</u> ບຸກຄົນບາງເທື່ອປະຕິບັດໜ້າທີ່ໄດ້ດີຢ່າງເໝາະສົມໂດຍປາດສະຈາກຄວາມຊ່ວຍເຫລືອ ຫລື ການຄວບຄຸມເບິ່ງນຳ. ເຖິງແມ່ນວ່າບຸກຄົນບໍ່ໄດ້ຊຳນານໃນໜ້າທີ່ໝົດທຸກຢ່າງ, ເຂົາເຈົ້າສາມາດເຮັດໄດ້ໝົດທຸກພາກສ່ວນ. ມັນບໍ່ເປັນ ຫຍັງດອກຖ້າຫາກວ່າເຂົາເຈົ້າຕ້ອງການທີ່ຈະຖືກຖາມ ຫລື ຖືກເຕືອນໃຈ. ບຸກຄົນເຮັດພາລະໜ້າທີ່ປະມານ 75 ເປີເຊັນຂອງເວລາ.

<u>ເຮັດໄດ້ດີຫລາຍທີ່ສຸດ (3)</u> ຊີ້ບອກອິດສະຣະພາບເຕັມທີ່ໃນພາລະໜ້າທີ່. ບຸກຄົນອາດຈະຊຳນານໃນວຽກງານ, ຫລື ໜ້າທີ່ແມ່ນງ່າຍໂພດສຳລັບເຂົາເຈົ້າ. ບຸກຄົນເຮັດພາລະກິດແລ້ວໝົດ ແລະ ໄດ້ດີທີ່ສຸດໂດຍປາດສະຈາກຄວາມຊ່ວຍເຫລືອ ຫລື ການຄວບຄຸມເບິ່ງນຳຈາກຄົນໃດຄົນນຶ່ງ ແລະ ຮູ້ຈັກວ່າເມື່ອໃດມັນຈຳເປັນທີ່ຈະເຮັດໜ້າທີ່ໂດຍບໍ່ຕ້ອງຖືກຖາມ ຫລື ເຕືອນໃຈ. ເຂົາເຈົ້າເຮັດໜ້າທີ່ໄດ້ດີທີ່ສຸດທຸກໆເທື່ອ ຫລື ເກືອບທຸກໆເທື່ອ.

## ພາກສ່ວນການປະພຶດດັດແປງ ICAP ຈະຕີຣາຄາປະເມີນຜົນເບິ່ງບັນຫາດ້ານການປະພຶດບໍ່?

ບໍ່. DDA ບໍ່ໄດ້ຕີຣາຄາປະເມີນຜົນການປະພຶດເມື່ອເວລາພິຈາຣະນາເບິ່ງເງື່ອນໄຂໄດ້ຮັບ. ຈຸດປະສົງຂອງ ICAP ແມ່ນເພື່ອຈະຕີຣາຄາເບິ່ງຄວາມຊຳນານໃນເຣື່ອງຂອງຄວາມຊຳນານເຮັດວຽກ, ຄວາມຊຳນານດ້ານການດຳຣົງຊີວິດສ່ວນຕົວ, ຄວາມຊຳນານດ້ານສັງຄົມ ແລະ ການສື່ສານ, ແລະ ຄວາມຊຳນານດ້ານການດຳຣົງຊີວິດໃນຊຸມນຸມຊົນ.

"ຈຸດລວມຂອງພາກສ່ວນການປະພຶດໃນ ICAPແມ່ນກ່ຽວກັບຄວາມສາມາດ. ຄົນໃດຄົນນຶ່ງຜູ້ທີ່, ຖ້າຫາກວ່າເມື່ອຍ, ໃຈຮ້າຍ ຫລື ງູດງິດ ບາງເທື່ອຈະປະຕິເສດທີ່ຈະເຮັດໜ້າທີ່ອາດຈະຖືກໃຫ້ຄະແນນວ່າ "ເຮັດໄດ້ດີໂດຍປາດສະຈາກຖືກຖາມເບິ່ງ" ຖ້າຫາກວ່າຄວາມຊຳນານແມ່ນຢູ່ພາຍໃນຄວາມສາມາດຂອງບຸກຄົນ ແລະ ເຮັດວຽກໄດ້ດີຫາມທັມມະດາແລ້ວ. ຖ້າຫາກວ່າການປະຕິເສດຫາກຍັງມີຢູ່ແຕ່ວ່າຖືກໃຊ້ໃສ່ພາລະກິດເຈາະຈົງບໍ່ພໍເທົ່າໃດ, ໂດຍສູງສຸດມັນອາດຈະລຸດຄະແນນຂອງລູກຄ້າລົງໂດຍນຶ່ງຄະແນນໃນສິ່ງອັນເຈາະຈົງ.

ການປະພຶດທີ່ຄັດແຍ້ງນຳກິຈກັມຂອງລູກຄ້າໃນແຕ່ລະວັນ ຫລື ດ້ວຍກິຈກັມອ້ອມຂ້າງອ້ອມແອວລາວ ຄວນຈະຖືກໃຫ້ຄະແນນວ່າເປັນບັນຫານຳການປະພຶດ, <u>ບໍ່ແມ່ນການຂາດການປະພຶດດັດແປງ</u>. ການປະຕິເສດທີ່ຈະເຮັດໜ້າທີ່ຈຳເປັນຊຶ່ງຢູ່ພາຍໃນຄວາມສາມາດຂອງບຸກຄົນ, ບາງເທື່ອຖືກເອີ້ນວ່າການປະພຶດບໍ່ປະຕິບັດຕາມ ຫລື ບໍ່ຮ່ວມມື, ອາດຈະຖືກບັນທຶກໄວ້ຢູ່ໃນພາກສ່ວນບັນຫານຳການປະພຶດຂອງ ICAP ຖ້າຫາກວ່າການປະຕິເສດແມ່ນທົ່ວໄປພຽງພໍທີ່ຈະກໍ່ຕັ້ງບັນຫາຕະລອດໃນຄວາມຊຳນານຫລາຍໆຢ່າງ. ຢູ່ໃນກໍຣະນີນີ້ຄວາມບໍ່ຮ່ວມມືນຳຂອງລູກຄ້າຈະບໍ່ຮັກຄະແນນອອກຈາກການປະພຶດຂອງເຂົາເຈົ້າ, ຊຶ່ງຄວນຈະຖືກໃຫ້ຄະແນນອີງຕາມຄວາມສາມາດແທນທີ່ວ່າຈະເປັນຄວາມຮ່ວມມື."

[ຈາກອອນລາຍນ໌ຂອງ Brad Hill "Guidelines for Completing the ICAP/SIB-R Adaptive Behavior Scale" (http://www.cpinternet.com/~bhill/icap/)]

## ຜູ້ຮ້ອງຂໍຖືກບົ່ງໃຫ້ມາປາກົດຕົວໃນຣະຫວ່າງ ICAPບໍ່?

ຜູ້ຮ້ອງຂໍຕ້ອງໄດ້ມາປາກົດຕົວ ແລະ ມີເວລາວ່າງໃຫ້ຢ່າງໜ້ອຍສຳລັບພາກສ່ວນນຶ່ງຂອງການສຳພາດ. ຜູ້ຮ້ອງຂໍ ແລະ ຜູ້ຕອບມາສາມາດຕອບໃນຫ້ອງສ່ວນຕົວ ຫລື ລວມຢູ່ນຳຜູ້ເຂົ້າຮ່ວມຄົນອື່ນ. ມັນສຳຄັນທີ່ຜູ້ຕອບມາຈະເອົາຣາຍຣະອຽດທີ່ຖືກຕ້ອງໃຫ້ເພື່ອວ່າຜູ້ຕອບມາຕ້ອງໄດ້ແຈ້ງບອກກົມ ຖ້າຫາກວ່າມີສິ່ງໃດສິ່ງນຶ່ງຣົບກວນນຳຄວາມຈິງໃຈບອກຄວາມຈິງ ແລະ ຄວາມເປີດເຜີຍຂອງເຂົາເຈົ້າ.

## ICAP ຖືກໃຫ້ຄະແນນແນວໃດ?

ຄຳຕອບຂອງ ICAP ຈະຖືກຕີເຂົ້າໃນຄອມພີວເຕີ. ຄອມພິເຕີຄິດໄລ່ຄະແນນມາດຕະຖານສຳລັບແຕ່ລະພາກສ່ວນຂອງສີ່ພາກສ່ວນຂອງຄວາມຊຳນານ, ໄລ່ອາຍຸຂອງຜູ້ຮ້ອງຂໍໃສ່ນຳ.

## ICAP ສະທ້ອນເຖິງການຕັດສິນໃນເງື່ອນໄຂໄດ້ຮັບແນວໃດ?

ເມື່ອເວລາ ICAP ຕ້ອງມີເພື່ອຈະເປັນຫລັກຖານຂອງຂອບເຂດຮ້າຍແຮງເພື່ອຈະມີເງື່ອນໄຂໄດ້ຮັບ DDA, ຄະແນນທີ່ມີສິດໄດ້ຮັບຕ້ອງສໍ່າກັບ ຫລື ຕ່ຳກວ່າຄະແນນເປັນເອກຣາດທົ່ວໄປເຈາະຈົງໃສ່ອາຍຸຂອງລູກຄ້າ/ຜູ້ຮ້ອງຂໍ (WAC 388-823-0900).

DEVELOPMENTAL DISABILITIES ADMINISTRATION (DDA)
ລາຍຣະອຽດກ່ຽວກັບ **ICAP** ສຳລັບຜູ້ຕອບມາ

# ການແຈ້ງການຂອງຄວາມເຂົ້າໃຈ
## Declaration of Understanding

| |
|---|
| ກ່ຽວກັບ: ຜູ້ຮ້ອງຂໍ ____________________ |

ຂ້າພະເຈົ້າໄດ້ອ່ານ ແລະ ເຂົ້າໃຈ "ລາຍຣະອຽດກ່ຽວກັບ ICAP ສຳລັບຜູ້ຕອບມາ."

ຂ້າພະເຈົ້າໄດ້ຮັບ "Guidelines for Completing the ICAP/SIB-R Adaptive Behavior Scale."
https://www.dshs.wa.gov/sites/default/files/FSA/forms/pdf/16-182.pdf

ຂ້າພະເຈົ້າເຂົ້າໃຈວ່າຄຳຕອບທີ່ຂ້າພະເຈົ້າເອົາໃຫ້ຕ້ອງຖືກຕ້ອງ ແລະ ຈະຖືກໃຊ້ໃນການຕີຣາຄາປະເມີນຜົນເບິ່ງຂອບເຂດຫລວງຫລາຍສຳລັບເງື່ອນໄຂໄດ້ຮັບ DDA.

ຂ້າພະເຈົ້າເຂົ້າໃຈວ່າບຸກຄົນທີ່ຖືກຕີຣາຄາເບິ່ງອາດຈະ ຫລື ອາດຈະບໍ່ ສອດຄ່ອງນຳກົດເກນສຳລັບເງື່ອນໄຂໄດ້ຮັບ DDA.

ຂ້າພະເຈົ້າມີທຸກໆໂອກາດທີ່ຈະຖາມຄຳຖາມ ແລະ ຄຳຖາມຂອງຂ້າພະເຈົ້າທຸກໆຄຳຖາມໄດ້ຖືກຕອບເປັນທີ່ພໍໃຈຂອງຂ້າພະເຈົ້າ.

| | |
|---|---|
| ລາຍເຊັນຂອງຜູ້ຕອບມາ | ວັນທີ |
| ລາຍເຊັນຂອງຜູ້ຕາງຫນ້າ DSHS / DDA | ວັນທີ |

ຫມາຍເຫດ: ການປະຕິເສດທີ່ຈະເຊັນຊື່ໃສ່ໃບແຈ້ງການໃບນີ້ຈະຍົກເວັ້ນບຸກຄົນອອກຈາກການຖືວ່າເປັນ "ຜູ້ຕອບມາ".

ການແຈກຢາຍ:
ໂກປີໄປຫາຜູ້ຕອບມາ
ໂກປີໄປຫາສຳນວນ